# ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ

# National Commission for the Advancement of Women, Mothers and Children

**ພາລະບົດບາດ** ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ **ເປັນການຈັດຕັ້ງລັດຖະບານທີ່ບໍ່ປະຈຳການ**, ມີພາລະບົດບາດ ເປັນເສນາທິການຊ່ວຍວຽກລັດຖະບານໃນການຄົ້ນຄວ້າ ກຳນົດ, ນະໂຍບາຍ, ຍຸດທະສາດ, ນິຕິກຳ, ແຜນດຳເນີນງານແຫ່ງຊາດ ແລະ ໂຄງການ ກ່ຽວກັບວຽກງານການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ການສົ່ງເສີມ, ການພັດທະນາ, ການປົກປ້ອງ ແລະ ການມີສ່ວນຮ່ວມຂອງເດັກ ລວມທັງການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກໃນຂອບເຂດທົ່ວປະເທດ.

ລະບົບການຈັດຕັ້ງ ຂອງ ຄຊກມດ ມີແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ ຄື:

1. **ຂັ້ນສູນກາງ:**
   - **1.1. ລະດັບຊາດ:** ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ.
   - **1.2. ຂັ້ນກະຊວງ, ອົງການ:** ຄະນະກຳມາທິການເພື່ອຄວາມກ້າວ ໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງ ແລະ ອົງການ.
2. **ຂັ້ນແຂວງ:** ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ແຂວງ ແລະ ນະຄອນຫຼວງວຽງຈັນ.
3. **ຂັ້ນເມືອງ:** ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ນະຄອນ, ເມືອງ ແລະ ເທດສະບານ.
4. **ຂັ້ນບ້ານ:** ຜູ້ປະສານງານວຽກຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ຂັ້ນບ້ານ.

## ວິໄສທັດຮອດປີ 2030

ວຽກ ຄວາມສະເໝີພາບຍິງ-ຊາຍ: "ຮັບປະກັນ ສິດ ແລະ ການພັດທະນາ ສິດສະເໝີພາບຍິງ-ຊາຍ ລວມທັງຢຸດຕິທຸກຮູບການຈຳແນກຕໍ່ແມ່ຍິງໃນທຸກຂົງເຂດວຽກງານ; ຮັບປະກັນໃຫ້ແມ່ຍິງໄດ້ເຂົ້າຮ່ວມຢ່າງເຕັມສ່ວນໃນການເຄື່ອນໄຫວທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຄອບຄົວ"

ວຽກ ແມ່ ແລະ ເດັກ: "ສຸມທຸກກຳລັງເຫື່ອແຮງ ແລະ ຄວາມສາມາດ ເພື່ອພັດທະນາ ແມ່ຍິງ ແລະ ເດັກ ໃຫ້ມີສຸຂະພາບສົມບູນ, ແຂງແຮງທາງດ້ານຮ່າງກາຍ ແລະ ຈິດໃຈ, ມີຄວາມຮູ້-ຄວາມສາມາດ ແລະ ສະຕິປັນຍາ ໃນການດຳລົງຊີວິດ, ຊຸກຍູ້ໃຫ້ຄອບຄົວ-ສັງຄົມ ເປັນເຈົ້າການໃນການປະຕິບັດສິດທິ ຕໍ່ແມ່ຍິງ-ເດັກ, ປົກປ້ອງ, ຕ້ານ ແລະ ແກ້ໄຂ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃຫ້ມີຄວາມຍຸຕິທຳ"

## ໜ້າທີ່

1. ຄົ້ນຄ້ວາ, ສ້າງ ຍຸດທະສາດ, ນິຕິກຳ, ແຜນດຳເນີນງານແຫ່ງຊາດ ແລະ ໂຄງການໃນແຕ່ລະໄລຍະ ເພື່ອສະເໜີລັດຖະບານ ຮັບຮອງ ແລະ ປະກາດໃຊ້;
   - ຊຸກຍູ້, ຕິດຕາມການຈັດຕັ້ງປະຕິບັດ, ປະເມີນຜົນ, ສະຫຼຸບລາຍງານ ແລະ ຖອດຖອນບົດຮຽນການຈັດຕັ້ງປະຕິບັດ ເພື່ອລາຍງານລັດຖະບານ.
2. ຄົ້ນຄວ້າ ສົນທິສັນຍາ, ສັນຍາ, ອະນຸສັນຍາ, ຖະແຫຼງການ ແລະ ເອກະສານອື່ນ ຂອງພາກພື້ນ ແລະ ສາກົນ ເພື່ອນຳສະເໜີລັດຖະບານພິຈາລະນາຮັບຮອງ, ໃຫ້ສັດຕະຍາບັນ, ເຂົ້າເປັນພາຄີ ຫຼື ຍົກເລີກ;
   - ຊຸກຍູ້, ຕິດຕາມ ການຈັດຕັ້ງປະຕິບັດ, ປະເມີນຜົນ, ສະຫຼຸບລາຍງານ ແລະ ຖອດຖອນບົດຮຽນ ການຈັດຕັ້ງປະຕິບັດນິຕິກຳສາກົນ ແລະ ພາກພື້ນ ໂດຍສະເພາະ ສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ, ສົນທິສັນຍາວ່າດ້ວຍສິດທິເດັກ ແລະ ອະນຸສັນຍາຕິດຂອງສົນທິສັນຍາວ່າດ້ວຍສິດທິເດັກ, ຖະແຫຼງການ ແລະ ແຜນປະຕິບັດງານປັກກິ່ງ ແລະ ອື່ນໆ.
   - ສ້າງເປັນບົດລາຍງານແຫ່ງຊາດ ປະຈຳໄລຍະ ເພື່ອລາຍງານສາກົນ.
3. ໂຄສະນາເຜີຍແຜ່, ປູກຈິດສຳນຶກ ແລະ ສ້າງຂະບວນການ.
4. ສ້າງ ຖານຂໍ້ມູນ, ດຳເນີນການສຳຫຼວດ, ບົດສຶກສາ ແລະ ບົດວິໄຈ.
5. ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນທີ່ເປັນເສນາທິການໃນວຽກງານດັ່ງກ່າວ.
6. ພົວພັນ ແລະ ຮ່ວມມື ກັບບັນດາປະເທດ ແລະ ບັນດາຄູ່ຮ່ວມພັດທະນາ ໃນພາກພື້ນ ແລະ ສາກົນ.

## ຜົນໄດ້ຮັບຂອງການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ສິດທິເດັກ ໃນໄລຍະຜ່ານມາ

- ຄ່າດັດຊະນີ ຄວາມສະເໝີພາບຍິງ-ຊາຍ ໃນປີ 2024 ຫຼຸດລົງ ເປັນ 0.700 ຈາກ 0.731 ໃນປີ 2020.
- ຄ່າດັດຊະນີຄວາມບໍ່ສະເໝີພາບຍິງ-ຊາຍ ໃນປີ 2023-2024 ເພີ່ມຂຶ້ນເປັນ 0.467 ຈາກ 0.459 ໃນປີ 2019-2020. ຄ່າດັດຊະນີການພັດທະນາຄວາມສະເໝີພາບຍິງ-ຊາຍ ໃນປີ 2023-2024 ຫຼຸດລົງ ເປັນ 0.919 ຈາກ 0.927 ໃນປີ 2019-2020
- ຄ່າດັດຊະນີການພັດທະນາຊັບພະຍາກອນມະນຸດແມ່ຍິງ ເພີ່ມຂຶ້ນຈາກ 0.589 ໃນປີ 2019 ເປັນ 0.593 ໃນປີ 2024.
- ເດັກທີ່ແຕ່ງດອງກ່ອນໄວ ໃນລະຫວ່າງ ອາຍຸ 15-19 ປີ: ການແຕ່ງດອງຂອງເດັກຍິງເພີ່ມຂຶ້ນເປັນ 26.6% ໃນປີ 2023 ຈາກ 23.5% ໃນປີ 2017; ການແຕ່ງດອງຂອງເດັກຊາຍເພີ່ມຂຶ້ນເປັນ 10.2% ໃນປີ 2023 ຈາກ 5.9% ໃນປີ 2017.

สแกนด้วย CamScanner

## ຜົນສຳເລັດທີ່ພົ້ນເດັ່ນການເຄື່ອນໄຫວໃນໄລຍະຜ່ານມາ

1. **ດ້ານນະໂຍບາຍ ແລະ ນິຕິກຳ ພາຍໃນ**
   1) ກົດໝາຍວ່າດ້ວຍຄວາມສະເໝີພາບຍິງ-ຊາຍ (ປີ 2019).
   2) ກົດໝາຍ ວ່າດ້ວຍ ການຕ້ານ ແລະ ສະກັດກັ້ນ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ (ປີ 2014).
   3) ວິໄສທັດຮອດປີ 2030 ແລະ ຍຸດທະສາດແຫ່ງຊາດ ເພື່ອຄວາມສະເໝີພາບຍິງ-ຊາຍ 10 ປີ (2016-2025).
   4) ວິໄສທັດຮອດປີ 2030 ແລະ ຍຸດທະສາດແຫ່ງຊາດ ເພື່ອແມ່ ແລະ ເດັກ 10 ປີ (2016-2025).
   5) ແຜນດຳເນີນງານແຫ່ງຊາດເພື່ອຄວາມສະເໝີພາບຍິງ-ຊາຍ 5 ປີ ຄັ້ງທີ I (2006-2010), II (2011-2015), III (2016-2020), IV (2021-2025).
   6) ແຜນດຳເນີນງານແຫ່ງຊາດເພື່ອແມ່ ແລະ ເດັກ 5ປີ ຄັ້ງທີ I (2011-2015), II (2016-2020), III (2021-2025).
   7) ແຜນດຳເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລົບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ 5ປີ ຄັ້ງທີ I (2014-2020), II (2021-2025).
2. **ການປະຕິບັດພັນທະສາກົນ**
   1) ບົດລາຍງານແຫ່ງຊາດ ປະຈຳໄລຍະທຳອິດ, 2, 3, 4, 5, 6, 7, 8, 9, ແລະ 10 ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການລົບ ລ້າງທຸກຮູບການຈຳແນກຕໍ່ແມ່ຍິງ.
   2) ບົດລາຍງານແຫ່ງຊາດ ປະຈຳໄລຍະທຳອິດ, 2, 3, 4, 5, 6 ແລະ 7 ກ່ຽວກັບ ການຈັດຕັ້ງປະຕິບັດປະຕິບັດສົນທິສັນຍາວ່າດ້ວຍສິດທິເດັກ ແລະ ອະນຸສັນຍາ ວ່າດ້ວຍ ການຄ້າຂາຍເດັກ, ການຄ້າປະເວນີເດັກ ແລະ ສິ່ງລາມົກອະນາຈານກ່ຽວກັບເດັກ ແລະ ອະນຸສັນຍາ ວ່າດ້ວຍ ການເຂົ້າຮ່ວມຂອງເດັກ ໃນການປະທະກັນ ດ້ວຍກຳລັງອາວຸດ
   3) ບົດລາຍງານແຫ່ງຊາດ ການຈັດຕັ້ງປະຕິບັດຖະແຫຼງການ ແລະ ແຜນປະຕິບັດງານປັກກິ່ງ ຄົບຮອບ 10 ປີ (1995-2005) ແລະ 30 ປີ (1995-2025).
3. **ໂຄສະນາເຜີຍແຜ່, ປູກຈິດສຳນຶກ ແລະ ສ້າງຂະບວນການ**
   1) ສະເຫຼີມສະຫຼອງ ວັນເດັກສາກົນ 01 ມິຖຸນາ ທຸກໆປີ.
   2) ສະເຫຼີມສະຫຼອງ ວັນເດັກໂລກ 20 ພະຈິກ ເລີ່ມແຕ່ປີ 2018 ເປັນຕົ້ນມາ.
   3) ລະນຶກວັນສາກົນເພື່ອລົບລ້າງຄວາມຮຸນແຮງຕໍ່ແມ່ຍິງ 25 ພະຈິກ ແຕ່ປີ 2011 ເປັນຕົ້ນມາ.
   4) ເວທີເດັກລາວ ຄັ້ງທີ I, II, III, IV ແລະ V.
4. **ການສ້າງຖານຂໍ້ມູນ, ດຳເນີນການສຳຫຼວດ, ບົດສຶກສາ ແລະ ບົດວິໄຈ.**
   1) ບົດສຳຫຼວດລະດັບຊາດ "ສຸຂະພາບ ແລະ ປະສົບການຊີວິດຂອງແມ່ຍິງ ຢູ່ ສປປ ລາວ" ປີ 2014.
   2) ບົດສຳຫຼວດລະດັບຊາດ "ການໃຊ້ຄວາມຮຸນແຮງຕໍ່ເດັກ ຢູ່ ສປປ ລາວ" ປີ 2015.
   3) ບົດສຶກສາຄ່າໃຊ້ຈ່າຍທີ່ຈຳເປັນຂອງຫຼາຍຂະແໜງການໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງ, ປີ 2015.
   4) ບົດວິໄຈຄວາມທຸກຍາກຂອງເດັກ ຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ, ປີ 2023.
   5) ບົດສຶກສາການແຕ່ງດອງກ່ອນໄວອັນຄວນຂອງເດັກ ແລະ ການຖືພາຂອງໄວໜຸ່ມ ໃນ ສປປ ລາວ , ປີ 2023.

## ທິດທາງແຜນການໃນຕໍ່ໜ້າ

**ຄາດໝາຍສູ້ຊົນ**

1. ຄ່າດັດຊະນີຄວາມສະເໝີພາບຍິງ-ຊາຍ ເພີ່ມຂຶ້ນ ຈາກ 0.700 ໃນປີ 2024 ເປັນ 0.733 ໃນປີ 2030;
2. ຄ່າດັດຊະນີຄວາມບໍ່ສະເໝີພາບຍິງ-ຊາຍ ໃຫ້ຫຼຸດລົງ ເປັນ 0.436 ; ຄ່າດັດຊະນີການພັດທະນາຄວາມສະເໝີພາບຍິງ-ຊາຍ ເປັນ 0.927; ຄ່າດັດຊະນີການພັດທະນາຊັບພະຍາກອນມະນຸດແມ່ຍິງ ເປັນ 0.675 ໃນປີ 2030;
3. ເປີເຊັນຂອງເດັກທີ່ຂາດເຂີນໃນຫຼາຍມິຕິ ໂດຍອີງໃສ່ນິຍາມແຫ່ງຊາດກ່ຽວກັບຄວາມຂາດເຂີນໃຫ້ເຫຼືອ 30% ໃນແຕ່ລະແຂວງ ໃນປີ 2030.

## ວຽກຈຸດສຸມ

1. ປັບປຸງ, ສ້າງ ບັນດານິຕິກຳ ແລະ ນະໂຍບາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ກົນໄກຕິດຕາມຊຸກຍູ້ ແລະ ການບັງຄັບໃຊ້ກົດໝາຍ ທີ່ຕິດພັນກັບຄວາມສະເໝີພາບຍິງ-ຊາຍ, ແມ່ ແລະ ເດັກ, ສົນທິສັນຍາ ຊີດໍ ແລະ ສົນທິສັນຍາສິດທິເດັກ;
2. ປະຕິບັດພັນທະຂອງລັດຖະບານ ສປປ ລາວ ໃນການຈັດຕັ້ງປະຕິບັດ ແລະ ສະຫຼຸບລາຍງານ ສົນທິສັນຍາສາກົນ, ອານຸສັນຍາ, ສັນຍາ ແລະ ຖະແຫຼງການ ສາກົນ ແລະ ພາກພື້ນ ທີ່ຕິດພັນກັບສິດທິແມ່ຍິງ ແລະ ສິດທິເດັກ;
3. ໂຄສະນາແນວທາງນະໂຍບາຍຂອງພັກ-ລັດ, ລັດຖະທຳມະນູນ, ກົດໝາຍ, ສົນທິສັນຍາຕ່າງໆ ທີ່ພົວພັນເຖິງຄວາມສະເໝີພາບຍິງ-ຊາຍ ແລະ ສິດທິເດັກ ແລະ ສ້າງຂະບວນການໃນວັນສຳຄັນຕ່າງໆ.
4. ສ້າງຄວາມເຂັ້ມແຂງໃນການເຊື່ອມສານທັດສະນະບົດບາດຍິງ-ຊາຍ ເຂົ້າໃນບັນດາແຜນພັດທະນາ, ແຜນງານ, ໂຄງການ, ກິດຈະກຳ ລວມທັງການຈັດສັນງົບປະມານທີ່ເອົາໃຈໃສ່ບົດບາດຍິງ-ຊາຍ ຂອງບັນດາຂະແໜງການ ແລະ ທ້ອງຖິ່ນ ໂດຍສະເພາະ ໂອກາດ ແລະ ການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດ, ການເຂົ້າເຖິງການສຶກສາ, ເຂົ້າເຖິງສາທາລະນະສຸກ, ການມີວຽກເຮັດງານທຳ, ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ, ການເຂົ້າເຖິງຂໍ້ມູນຂ່າວສານ ວິທະຍາສາດເຕັກໂນໂລຊີ ແລະ ເຂົ້າເຖິງຕຳ ແໜ່ງນຳພາຄຸ້ມຄອງໃນຂະແໜງການພາກລັດ ແລະ ເວທີການເມືອງ ເພື່ອໃຫ້ສາມາດບັນລຸຄວາມສະເໝີພາບຍິງ-ຊາຍ ຕາມຄາດໝາຍທີ່ວາງໄວ້;
5. ປະສານສົມທົບກັບໃນຫຼາຍຂະແໜງການ ພັດທະນາຊີວິດການເປັນຢູ່ຂອງເດັກ ໃຫ້ຫຼຸດຜ່ອນຈາກການຂາດເຂີນໃນຫຼາຍມິຕິ (ໂພສະນາການ, ສຸຂະພາບ, ການປົກປ້ອງເດັກ, ສຸຂະອະນາໄມ, ທີ່ຢູ່ອາໃສ, ການພັດທະນາກ່ອນໄວຮຽນ, ການສຶກສາ ແລະ ຂໍ້ມູນຂ່າວສານ);
6. ປ້ອງກັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ ແລະ ການແຕ່ງດອງກ່ອນໄວ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ.
7. ສ້າງຄວາມເຂັ້ມແຂງໃນການສ້າງ ແລະ ນຳໃຊ້ສະຖິຕິຄວາມສະເໝີພາບຍິງ-ຊາຍ ຂອງບັນດາຂະແໜງການ ແລະ ທ້ອງຖິ່ນ.

**ຫ້ອງການ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ**

ໂທ: 020 23885777, ອີເມວ: ncawmcpermanentsec@gmail.com, ເວັບໄຊ: www.laoncawmc.gov.la

ຕັ້ງຢູ່: ຊັ້ນ 3 ຕຶກ ສສຍລ, ຖະໜົນທ່າເດື່ອ, ບ້ານປົ່ງຂະໜອງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ

สแกนด้วย CamScanner